ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຕຊ
ເລກທີ 0376
ວັນທີ 05 APR 2017
ໂທລະສັບ 021 217770

ເລກທີ: 11 /ທຫກ

ນະຄອນຫຼວງວຽງຈັນ, ວັນທີ: 04 ເມສາ 2017

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 20-24/03/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

- ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,22% ທຽບເງິນເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກການຂາຍບ້ານມືສອງ ຂອງ ສະຫະລັດອາເມລິກາ ໃນເດືອນ 2/2017 ຫຼຸດລົງ 3,7% ຈາກເພີ່ມຂຶ້ນ 3,3% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 13-17/03/2017 | ອາທິດນີ້ 20-24/03/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0775 | 1,0799 | -0,22% |
| ໂດລາ/ເຢນ | 113,33 | 111,10 | 2,01% |
| ໂດລາ/ບາດ | 34,90 | 34,650 | 0,72% |
| ໂດລາ/ເປໂຊ | 50,15 | 50,24 | -0,17% |
| ໂດລາ/ຣູເປັຍ | 13.342,0 | 13.326,00 | 0,12% |
| ໂດລາ/ໂດລາສິງກະໂປ | 1,4027 | 1,3987 | 0,29% |
| ໂດລາ/ຢວນ | 6,9030 | 6,8857 | 0,25% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 1,56% ຈາກ 50,14 ໂດລາ/ບາເຣວ ມາເປັນ 49,36 ໂດລາ/ບາເຣວ ເນື່ອງຈາກ ປະເທດລີບີມີແຜນຈະເພີ່ມກຳລັງການຜະລິດນ້ຳມັນດິບຂຶ້ນເປັນ 0,8 ລ້ານບາເຣວ/ວັນ ໃນເດືອນ 4/2017 ແລະ ເພີ່ມຂຶ້ນເປັນ 1,1

ລ້ານບາເຣວ/ວັນ ໃນເດືອນ 8/2017. ສ່ວນລາຄາຄຳ ເພີ່ມຂຶ້ນ 1,44% ຈາກ 1.226,49 ໂດລາ/ອອນ ມາເປັນ 1.244,10 ໂດລາ/ອອນ ເນື່ອງຈາກກອງທຶນ SPDR ເພີ່ມການຖືຄອງຄຳ ແລະ ສັນຍາຊື້-ຂາຍຄຳ ຂຶ້ນ 4,15 ໂຕນ ເປັນ 834,40 ໂຕນ ໃນວັນທີ 21/3/2017 ຈາກ 830,25 ໂຕນ ໃນວັນທີ 17/3/2017.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,11% ແລະ ອ່ອນຄ່າ 0,46% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 1,94% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 4,45% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 13-17/03/2017 | | | ອາທິດນີ້ 20-24/03/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.310,41 | 8.352,97 | 8.330,40 | 8.315,65 | 8.365,22 | 8.339,22 | -0,06% | -0,15% | -0,11% | -1,97% | -1,88% | -1,94% |
| ບາດ | 237,40 | 238,59 | 238,15 | 238,44 | 239,70 | 239,24 | -0,44% | -0,46% | -0,46% | -4,52% | -4,47% | -4,45% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 3,73% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,49%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,36% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,95%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (17-23/03/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 21,91 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 45,39 ລ້ານໂດລາ ແລະ ຂາຍໂດລາໄດ້ 23,48 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.016,49 ລ້ານບາດ (ໃນນີ້ ຊື້ບາດໄດ້ 177,64 ລ້ານບາດ ແລະ ຂາຍບາດໄດ້ 1.194,13 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 17,34% ແລະເງິນບາດຫຼຸດລົງ 33,69%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 2,40 ລ້ານໂດລາ ແລະເງິນບາດສຸດທິ ຈຳນວນ 13 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 2,30 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 106,35 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວ 15 ລ້ານໂດລາ ແລະ ເງິນບາດບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 10-16/3/2017 | | ອາທິດທີ 17-23/3/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **64,46** | **111,13** | **45,39** | **177,64** | **-29,58%** | **59,85%** |
| - ທ/ຄທຸລະກິດລັດ | 10,51 | 78,45 | 13,40 | 46,99 | 27,50% | -40,10% |
| - ທ/ຄທຸລະກິດອື່ນໆ | 53,95 | 32,67 | 31,99 | 130,65 | -40,70% | 299,79% |
| **2. ການຂາຍເງິນຕາຕ່າງປະເທດ** | **18,86** | **1.957,61** | **23,48** | **1.194,13** | **24,50%** | **-39,00%** |
| - ທ/ຄທຸລະກິດລັດ | 10,38 | 96,31 | 11,62 | 143,92 | 11,95% | 49,43% |
| - ທ/ຄທຸລະກິດອື່ນໆ | 8,48 | 1.861,14 | 11,86 | 1.050,21 | 39,86% | -43,58% |
| **ຊື້-ຂາຍສຸດທິ ທທກ** | **45,60** | **-1.846,48** | **21,91** | **-1.016,49** | **-51,95%** | **-44,95%** |
| - ຜິດດ່ຽງ ຊື້-ຂາຍ | 70,74% | -1661,56% | 48,27% | -572,22% | -31,76% | -65,56% |
| - ມູນຄ່າການຊື້-ຂາຍ | **83,32** | **2.068,74** | **68,87** | **1.371,77** | **-17,34%** | **-33,69%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **2,30** | **0,00** | **-2,40** | **-13,00** | | |
| - ທຫລ ຊື້ຈາກ ທທກ | 2,30 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 0,00 | 2,40 | 13,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **5,15** | **134,60** | **2,30** | **106,35** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0** | **0** | **-15,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0 | 0 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0 | 0 | 15,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 02/2017 ຢູ່ໃນລະດັບ 1,67% ຫຼຸດລົງຈາກ 2,27% ໃນເດືອນ 01/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ຫຼຸດລົງ 57,80% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 54,32 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 889 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 97 ສະບັບ ເທົ່າກັບ 9,83% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 356,28 ຕື້ກີບ ຫຼຸດລົງ 11,60 ຕື້ກີບ ເທົ່າກັບ 3,15% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (17-23/3/2017) ມີທັງໝົດ 3.715 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.004 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 365,65 ຕື້ກີບ ຈາກ 1.85,43 ມາເປັນ 819,78 ຕື້ກີບ ເທົ່າກັບ 30,84%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 711 ຄັ້ງ, ມູນຄ່າການໂອນ 214,37 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.105,95 ຈຸດ ຫຼຸດລົງ 0,39% ເມື່ອທຽບໃສ່ອາທິດຜ່ານມາ, ມີປະລິມານຊື້-ຂາຍຮຸ້ນທັງໝົດ 269.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,37 ຕື້ກີບ ເພີ່ມຂຶ້ນ 137,64% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 61,47% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ **13-17/03/2017** | ດັດຊະນີອາທິດທີ **20-24/3/2017** | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.110,24 | 1.105,95 | -0,39% | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 18.500 | 103.595.000 | 5.600 | 173.600 | 958.315.000 | 5.520 | 838,38 | 825,06 | -79 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 65.900 | 362.050.000 | 5.494 | 66.900 | 359.755.000 | 5.378 | 1,52 | -0,63 | -116 |
| ບໍລິສັດລາວເວີນ ມະຫາຊົນ | 0 | 0 | 9.100 | 0 | 0 | 9.100 | - | - | - |
| ບໍລິສັດປີໂຕລ້ຽມ ເທລດ ດິ້ງລາວ ມະຫາຊົນ | 300 | 660.000 | 2.300 | 29.400 | 58.940.000 | 2.300 | 9.700 | 8.830,30 | - |
| ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ | 36.500 | 113.150.000 | 3.082 | 0 | 0 | 3.100 | -100 | -100 | - |
| ທັງໝົດ | 121.200 | 579.455.000 | 4.791 | 269.900 | 1.377.010.000 | 5.102 | 122,69 | 137,64 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມສຳມະນາຮ່ວມກັນລະຫວ່າງ ທຫລ ກັບທະນາຄານປະຊາຊົນ ກ່ຽວກັບຫົວຂໍ້ "ລະບົບຊຳລະສະສາງ" ແລະ "ການຄຸ້ມຄອງເງິນຕາຕ່າງປະເທດ" ໃນລະຫວ່າງວັນທີ 20-23 ມີນາ 2017; ❷ ກອງປະຊຸມສຳມະນາຮ່ວມກັນລະຫວ່າງ ທຫລ ກັບສະຖາບັນພັດທະນາຊັບພະຍາກອນມະນຸດ ໃນຫົວຂໍ້ "ການບໍລິຫານບຸກຄະລາກອນ" ໃນລະຫວ່າງວັນທີ 20-24 ມີນາ 2017 ທີ່(ສູນຮ່ວມມືລາວ-ຍີ່ປຸ່ນ); ❸ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍລະບົບຊາລະສະສາງແຫ່ງຊາດ ໃນວັນທີ 20 ມີນາ 2017;
- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມການກະກຽມດຳເນີນກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກຄັ້ງທີ 4 ສະໄໝທີ X ທີ່(ຫ້ອງວ່າການສູນກາງພັກ ຫຼັກ 6); ❷ ກອງປະຊຸມວິຊາການກ່ຽວກັບການຈັດຕັ້ງປະຕິບັດການພັດທະນາລະບົບຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ; ❸ ກອງປະ

ຊຸມສຳມະນາແລກປ່ຽນບົດຮຽນໃນຫົວຂໍ້ "ການບໍລິຫານຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະບົບຊຳລະ" ໃນລະຫວ່າງວັນທີ 21-22 ມີນາ 2017; ❹ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍລະບົບຊຳລະສະສາງແຫ່ງຊາດ ໃນວັນທີ 20 ມີນາ 2017;

- ສຳເລັດລົງກວດກາ ສະຖາບັນການເງິນທີ່ຮັບເງິນຝາກ ເພື່ອການລົງທຶນ ແລະ ພັດທະນາແລະສະຖາບັນການເງິນທີ່ບໍ່ຮັບເງິນຝາກ ທະວີໂຊກ ໃນລະຫວ່າງວັນທີ 20-24 ມີນາ 2017.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ຄະນະສືບຕໍ່ລົງຕິດຕາມການປະຕິບັດມາດຕະການຊື່ອຄາວ ທີ່ ທະນາຄານ ພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ;
- ກະກຽມອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະລາດຫຼັກຊັບລາວ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແລະ ບໍສັດລັດວິສາຫະກິດລາວໂທລະຄົມມະນາຄົມ ມະຫາຊົນ;
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມເປີດກວ້າງກ່ຽວກັບຮ່າງກົດໝາຍວ່າດ້ວຍລະບົບຊຳລະ ຢູ່ (ທຫລ); ❷ ກອງປະຊຸມກ່ຽວກັບວຽກງານກວດກາ ທຫລ ປະຈຳປີ 2016; ❸ ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະລາດຫຼັກຊັບ ຄັ້ງທີ I ປະຈຳປີ 2017 ຢູ່ (ທຫລ); ❹ ກອງປະຊຸມກ່ຽວກັບການສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- **ກະກຽມເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບການເປີດເຜີຍຂໍ້ມູນປະຈຳໄຕມາດ 1 ປີ 2017 ຂອງບໍລິສັດລາວເວີນ ມະຫາຊົນ; ❷ ກອງປະຊຸມ " ການບໍລິຫານໜີ້ສາທາລະນະ ໃນພາກພື້ນອາຊີ ປະຈຳປີ 2017" ທີ່ຊຽມລຽບ, ປະເທດກຳປູເຈຍ.
- ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານຫວຽດຕິນຄົບຮອບ 5 ປີ ທີ່ (ໂຮງແຮມເມືອງແທັງ);
- ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງ ທ່ານ ເອກອັກຄະລັດຖະທູດ ແຫ່ງ ສ. ກູບາ ປະຈຳ ສປປ ລາວ.

**ຫົວໜ້າຫ້ອງການ**

ເພັດສະຖາພອນ ແກ້ວວົງວິຈິດ